ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---------------------

ສຳນັກງານນາຍົກລັດຖະມົນຕີ

ເລກທີ 64 /ນຍ

ນະຄອນຫລວງວຽງຈັນ, ວັນທີ 21.03.2005

# ດຳລັດ

## ວ່າດ້ວຍການກຳນົດຄ່າແຮງງານຕ່ຳສຸດ ຂອງຜູ້ອອກແຮງງານ ໃນຂົງເຂດທຸລະກິດ

------------

- ອີງຕາມກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສ ປ ປ ລາວ ສະບັບເລກທີ 02/ສພຊ ລົງວັນທີ 6 ພຶດສະພາ 2003.
- ອີງຕາມກົດໝາຍແຮງງານ ແຫ່ງ ສ ປ ປ ລາວ ສະບັບເລກທີ 02/94 ລົງວັນທີ 14 ມີນາ 1994.
- ອີງຕາມການສະເໜີ ຂອງລັດຖະມົນຕີວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 488/ຮສສ ລົງວັນທີ 22/2/2005.

**ນາຍົກລັດຖະມົນຕີ ອອກດຳລັດ:**

<u>ມາດຕາ 1</u>: ກຳນົດລະດັບເງິນຄ່າແຮງງານຕ່ຳສຸດ ຂອງຜູ້ອອກແຮງງານ ທີ່ເຮັດວຽກໃນຂົງເຂດທຸລະກິດຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ 290.000 ກີບ/ຄົນ/ເດືອນ (ສອງຮ້ອຍເກົ້າສິບພັນກີບ).

<u>ມາດຕາ 2</u>: ມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອອອກບົດແນະນຳການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

<u>ມາດຕາ 3</u>: ດຳລັດສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ວັນທີ 01 ເມສາ 2005 ເປັນຕົ້ນໄປ ແລະ ປ່ຽນແທນດຳລັດ ສະບັບເລກທີ 14/ນຍ ລົງວັນທີ 16/2/2000.

**ນາຍົກລັດຖະມົນຕີ ແຫ່ງ ສ ປ ປ ລາວ**

LO18

ບຸນຍັງ ວໍລະຈິດ